Education Public Schools

NSW GOVERNMENT

## The Common Grade Scale for Preliminary Courses

# ການວັດແທກເກຣດແບບທົ່ວໄປສຳລັບວິຊາຮຽນເບື້ອງຕົ້ນ

ການວັດແທກເກຣດແບບທົ່ວໄປທີ່ສະແດງໃຫ້ເຫັນຢູ່ຂ້າງລຸ່ມນີ້ແມ່ນໃຊ້ສຳລັບລາຍງານຄວາມສຳເລັດຂອງ ນັກຮຽນ ໃນເບື້ອງຕົ້ນຂອງຂັ້ນ 6 ປີ (Preliminary Stage 6 year) ຢູ່ໃນໝົດທຸກໂຮງຮຽນໃນຣັດ NSW.

ການວັດແທກເກຣດແບບທົ່ວໄປອະທິບາຍຂີດຄວາມສາມາດໃນແຕ່ລະເກຣດຂອງເກຣດທັງໝົດຫ້າຂັ້ນ.

| ເກຣດ | ການວັດແທກເກຣດແບບທົ່ວໄປສຳລັບວິຊາຮຽນເບື້ອງຕົ້ນ |
|---|---|
| A | ນັກຮຽນສະແດງໃຫ້ເຫັນວ່າມີຄວາມຮູ້ຢ່າງກວ້າງຂວາງໃນເນື້ອໃນໃຈຄວາມ ແລະ ມີຄວາມເຂົ້າໃຈໃນຄວາມໝາຍຂອງວິຊາຮຽນ, ແລະ ນຳໃຊ້ບັນດາທັກສະ ແລະ ວິທີປະຕິບັດທີ່ໄດ້ພັທນາສູງໃນເນື້ອໃນໃຈຄວາມອັນຫຼາກຫຼາຍ. ນອກຈາກນີ້ແລ້ວ ນັກຮຽນຍັງໄດ້ສະແດງໃຫ້ເຫັນເຖິງທັກສະທາງດ້ານຄວາມຄິດສ້າງສັນ ແລະ ຮູ້ວິພາກວິຈານໂດຍໃຊ້ການວິເຄາະແລະການຕີລາຄາ. ນັກຮຽນສາມາດສື່ສານ ເລື້ອງຄວາມຄິດແລະຂໍ້ມູນອັນສລັບຊັບຊ້ອນ ໄດ້ຢ່າງມີປະສິດທິພາບ. |
| B | ນັກຮຽນສະແດງໃຫ້ເຫັນວ່າມີຄວາມຮູ້ທົ່ວເຖິງດີໃນເນື້ອໃນໃຈຄວາມ ແລະ ມີຄວາມເຂົ້າໃຈໃນຄວາມໝາຍຂອງວິຊາຮຽນ ແລະ ນຳໃຊ້ບັນດາທັກສະ ແລະ ວິທີປະຕິບັດທີ່ໄດ້ພັທນາເປັນຢ່າງດີໃນເນື້ອໃນໃຈຄວາມອັນຫຼາກຫຼາຍ. ນອກຈາກນີ້ແລ້ວ ນັກຮຽນຍັງໄດ້ສະແດງໃຫ້ເຫັນເຖິງທັກສະທາງດ້ານຄວາມຄິດສ້າງສັນ ແລະ ຮູ້ວິພາກວິຈານ ໂດຍໃຊ້ການວິເຄາະແລະການຕີລາຄາ. ນັກຮຽນສາມາດສື່ສານເລື້ອງຄວາມຄິດແລະຂໍ້ມູນອັນສລັບຊັບຊ້ອນໄດ້ຢ່າງແຈ່ມແຈ້ງດີ. |
| C | ນັກຮຽນສະແດງໃຫ້ເຫັນວ່າມີຄວາມຮູ້ດີພໍຄວນໃນເນື້ອໃນໃຈຄວາມ ແລະ ມີຄວາມເຂົ້າໃຈໃນຄວາມໝາຍຂອງວິຊາຮຽນ, ແລະ ນຳໃຊ້ບັນດາທັກສະ ແລະ ວິທີປະຕິບັດໃນເນື້ອໃນໃຈຄວາມໃນວົງເຂດທີ່ລຶ້ງເຄີຍ. ນອກຈາກນີ້ແລ້ວ ນັກຮຽນຍັງໄດ້ສະແດງໃຫ້ເຫັນເຖິງທັກສະໃນການຄັດເລືອກເອົາຂໍ້ມູນບາງຢ່າງແລະນຳເອົາຂໍ້ມູນນັ້ນໄປປະສານໃຊ້ ແລະ ສາມາດສື່ສານເລື້ອງຄວາມຄິດທີ່ກ່ຽວພັນໄດ້ຢ່າງເໝາະສົມ. |
| D | ນັກຮຽນສະແດງໃຫ້ເຫັນວ່າມີຄວາມຮູ້ ແລະ ຄວາມເຂົ້າໃຈຂັ້ນພື້ນຖານໃນເນື້ອໃນໃຈຄວາມ ແລະ ຄວາມໝາຍຂອງວິຊາຮຽນ ແລະ ນຳໃຊ້ທັກສະ ແລະ ວິທີປະຕິບັດໃນເນື້ອໃນບາງຢ່າງທີ່ມີຄວາມລຶ້ງເຄີຍ. ນອກຈາກນີ້ແລ້ວ ນັກຮຽນຍັງສະແດງໃຫ້ເຫັນວ່າມີທັກສະໃນການຄັດເລືອກ ແລະ ການນຳໃຊ້ຂໍ້ມູນ ແລະ ສື່ສານ ກ່ຽວກັບຄວາມຄິດຕ່າງໆໄດ້ຢ່າງລະອຽດ. |
| E | ນັກຮຽນສະແດງໃຫ້ເຫັນວ່າມີຄວາມຮູ້ ແລະ ຄວາມເຂົ້າໃຈຂັ້ນຕົ້ນໃນ ເນື້ອໃນໃຈຄວາມ ແລະ ຄວາມໝາຍຂອງວິຊາຮຽນ ແລະ ນຳໃຊ້ທັກສະ ແລະ ວິທີປະຕິບັດດ້ວຍການແນະນຳ. ນອກຈາກນີ້ແລ້ວ ນັກຮຽນຍັງສະແດງໃຫ້ເຫັນວ່າມີທັກສະພຽງຂັ້ນຕົ້ນໃນການເລົ່າເລື້ອງຂໍ້ມູນ ແລະ ສື່ສານກ່ຽວກັບຄວາມຄິດຕ່າງໆ. |

| Grade | Common Grade Scale for Preliminary Courses |
|---|---|
| A | The student demonstrates extensive knowledge of content and understanding of course concepts, and applies highly developed skills and processes in a wide variety of contexts. In addition the student demonstrates creative and critical thinking skills using perceptive analysis and evaluation. The student effectively communicates complex ideas and information. |
| B | The student demonstrates thorough knowledge of content and understanding of course concepts, and applies well-developed skills and processes in a variety of contexts. In addition the student demonstrates creative and critical thinking skills using analysis and evaluation. The student clearly communicates complex ideas and information. |
| C | The student demonstrates sound knowledge of content and understanding of course concepts, and applies skills and processes in a range of familiar contexts. In addition the student demonstrates skills in selecting and integrating information and communicates relevant ideas in an appropriate manner. |
| D | The student demonstrates a basic knowledge of content and understanding of course concepts, and applies skills and processes in some familiar contexts. In addition the student demonstrates skills in selecting and using information and communicates ideas in a descriptive manner. |
| E | The student demonstrates an elementary knowledge of content and understanding of course concepts, and applies some skills and processes with guidance. In addition the student demonstrates elementary skills in recounting information and communicating ideas. |